*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 02, 19-25*
*https://doi.org/10.69692/SUJMRD110219*

# Life Lessons from the Fable "Nanthaka the Cow and the Lion King" (Nanthapakone) in the Lao version of "NangTanTai" Volume 1 (panchatanta) by Sila VILAVONG

**Bouncahn KEOMANYKA**

*Department of Vietnamese, Faculty of Languages, Souphanouvong University, Lao PDR*

***Correspondence:** Bounchan KEOMANYKA, Department of Vietnamese, Faculty of Languages, Souphanouvong University*
*Tel&What app +8562022996269, Mail: bounchan11223344@gmail.com*

***Article Info:***
***Submitted: March 08, 2025***
***Revised: March 30, 2025***
***Accepted: April 09, 2025***

**Abstract**

This article is a study of life lessons from the story "Nantaka the Cow and the Lion King" in the Lao version of "Nang Tantay" Volume 1 (Nanthakorn) translated by: Maha Sila Vilavong. This is qualitative research. The purpose is to analyze the life lessons that appear in the animal story through the actions and conversations of the characters. In this study, the researcher analyzed the characters in the story in depth by analyzing them according to the theory of character analysis of Sengfa Horanoupha. For data analysis, we used interpretation, verification, evaluation, and classification into each aspect.

The study found that the life lessons from the fable "The Cow and the Lion" have a total of 67 messages divided into 3 areas: life lessons about qualities such as: gratitude, patience, responsibility for work, lessons about politics and society such as: knowing how to plan and evaluate the thoughts and feelings of subordinates, knowing how to weigh the benefits and harms of dividing work, in society there can be no good people - bad people, honest people - greedy people, and lessons about behavior - practice such as: lack of awareness, extravagance, improper actions will have great consequences.

**Keywords***: Life lessons, animal tales, the story of NangTantay, Sila Vilavong*

## 1. ພາກສະເໜີ

ບົດຮຽນຊີວິດໃນນິທານສັດມີ 3 ດ້ານຄື:ບົດຮຽນທາງດ້ານສະຕິປັນຍາກ່ຽວກັບອຸດົມການ, ບົດຮຽນກ່ຽວກັບພຶດຕິກຳ ແລະ ບົດຮຽນກ່ຽວກັບຄຸນຄ່າຂອງການອອກແຮງງານ, ນິທານສັດເປັນໜຶ່ງໃນປະເພດວັນນະຄະດີພື້ນເມືອງ, "ປະເພດນິທານທີ່ມີຈຸດປະສົງເພື່ອຖ່າຍທອດບົດຮຽນດ້ານສິນທຳ, ເຫດຜົນ, ປັດຊະຍາ , ແນວຄວາມຄິດຂອງຊີວິດ ຫຼື ຄວາມເຫັນກ່ຽວກັບຄວາມເປັນຈິງຂອງສັງຄົມ, ບົດຮຽນຊີວິດທີ່ຖອດຖອນມາຈາກນິທານສັດແມ່ນສາມາດປະຕິບັດໄດ້ສະເໝີ, ແລະ ເຂົ້າໃຈງ່າຍ. ຜູ້ອ່ານ, ຜູ້ຟັງ ອີງຕາມຄວາມສາມາດ ແລະ ລົດຊາດທີ່ສວຍງາມ, ສາມາດຮັບຮູ້ ແລະ ນຳໃຊ້ບົດຮຽນເຫຼົ່ານີ້ກັບຊີວິດຈາກທັດສະນະທີ່ແຕກຕ່າງກັນ (Ngô thị thanh, 2023).

ຈຸດປະສົງຕົ້ນຕໍຂອງນິທານສັດແມ່ນບົດຮຽນ. ຄວາມຮູ້ທີ່ເປັນຄະຕິເຕືອນໃຈໃຫ້ແກ່ການດຳລົງຊີວິດຂອງຄົນໃນສັງຄົມ. ສະນັ້ນ. ການເອົາເລື່ອງສັດມາເວົ້າເຖິງເລື່ອງຄົນແມ່ນຮູບການປະດິດແຕ່ງຕົ້ນຕໍຂອງນິທານສັດ. ວິທີການສົມທຽບແມ່ນຜູ້ແຕ່ງຈະຕ້ອງໄດ້ອີງໃສ່ຈຸດພິເສດ ແລະ ລັກສະນະຂອງສັດແຕ່ລະປະເພດມາເປັນສັນຍະລັກໃຫ້ແກ່ຄົນ. ການຍົກຂຶ້ນມາປຽບທຽບນີ້ຕ້ອງເໝາະສົມ ແລະ ແທດເໝາະກັບເນື້ອໃນຄວາມໝາຍທີ່ບົດເລື່ອງຢາກເວົ້າເຖິງ (ພົນລືຊາ ແລະ ແກ້ວຄູນບໍລິສັກ, 2010).

ເນື້ອໃນທີ່ອຸດົມສົມບູນທີ່ສຸດຂອງນິທານສັດ ແມ່ນບົດຮຽນຄຳສັ່ງສອນສຳລັບຄົນເຮົາ. ຜ່ານການດຳລົງຊີວິດຈິງປະຊາຊົນໄດ້ເອົາໃຈໃສ່ສັງເກດທຸກປະການທີ່ເກີດຂຶ້ນໃນສັງຄົມກໍຄືທຳມະຊາດ ແລ້ວເຂົາເຈົ້າມີການເລືອກເຟັ້ນ, ຖ່າຍທອດ ແລະ ສະຫຼຸບມາເປັນບົດຮຽນທີ່ມີລັກສະນະສັດຈະທຳ ແລະ ປັດຊະຍາ. ນິທານສັດຫຼາຍເລື່ອງໄດ້ເວົ້າເຖິງບົດຮຽນຊີວິດເປັນບັນຫາໃຫຍ່ ແລະ ມີຄວາມສຳຄັນ, ແຕ່ກໍມີນິທານຈຳນວນໜ້ອຍທີ່ເວົ້າເຖິງບົດຮຽນເຊິ່ງເປັນບັນຫານ້ອຍແຕ່ຫາກມີຄວາມສຳຄັນ ແລະ ຈຳເປັນໃນການດຳລົງຊີວິດຄື: ແບບແຜນການດຳລົງຊີວິດ, ການພົວພັນລະຫວ່າງເພື່ອນມິດ, ລະຫວ່າງຜົວກັບເມຍ, ແລະ ບັນຫາທັດສະນະຄຸນສົມບັດຕ່າງໆ. (ວົງດາລາ ພ້ອມດ້ວຍຄະນະ, 2008).

ນິທານສັດເປັນປະເພດວັນນະຄະດີພື້ນເມືອງທີ່ເປັນເອກະລັກ ແລະ ໜ້າສົນໃຈ, ມີຄວາມໝາຍຫຼາຍຢ່າງໃນຊີວິດ, ດຶງດູດຄວາມສົນໃຈຂອງນັກສະສົມ ແລະ ນັກຄົ້ນຄວ້າຫຼາຍຄົນ. ນຳໃຊ້ວິທີການປະຫວັດສາດ ພ້ອມກັບການປຽບທຽບ ແລະ ວິເຄາະ, ບົດຄວາມສ້າງພາບລວມຂອງຂະບວນການເກັບກຳ, ສັງລວມຈາກຄຸນຄ່າຂອງນິທານພື້ນບ້ານໄດ້ພົບວ່າ: ນິທານພື້ນບ້ານເປັນການເລົ່າເພື່ອໃຫ້ເກີດຄວາມເພີດເພີນ ຄຸນຄ່າທີ່ສຳຄັນອີກປະການໜຶ່ງ ຄືເປັນເຄື່ອງມືອົບຮົມສັ່ງສອນຄຸນນະທຳແກ່ຜູ້ຄົນໃນສັງຄົມພຶດຕິກຳຂອງຕົວລະຄອນໃນນິທານຈະເປັນສິ່ງທີ່ດີທີ່ຜູ້ຟັງອາດຈະປັບປຸງພຶດຕິກຳໃຫ້ເໝາະສົມກັບຄວາມຕ້ອງການຂອງສັງຄົມໄດ້. ຄຸນນະທຳທີ່ປາກົດໃນນິທານມີຄື: ຄວາມເອື້ອເຟື້ອເພື່ອແຜ່, ຄວາມມີເມດຕາກະລຸນາ, ຄວາມກະຕັນຍູຮູ້ບຸນຄຸນ, ຄວາມຊື່ສັດ, ຄວາມສະແຫວງຫາຄວາມຮູ້ ແລະ ຄວາມພໍໃຈໃນສິ່ງທີ່ມີຢູ່. (Yennan, 1996).

ນິທານສັດສ່ວນຫຼາຍເປັນເລື່ອງສັ້ນກະທັດຮັດ ແລະ ມີເນື້ອໃນສຶກສາທາງດ້ານແນວຄິດ. ບົດເລື່ອງຕ່າງໆສະຫຼຸບດ້ວຍຄຳເວົ້າທີ່ເປັນຄະຕິເຕືອນໃຈເຊັ່ນ: ຄຳສຸພາສິດເພື່ອສຶກສາຄຸນສົມບັດຂອງຄົນ ຕົວຢ່າງ ບົດເລື່ອງໃນນິທານນາງຕັນໄຕ ແລະ ນິທານສຽວສະຫວາດເປັນຕົ້ນ (ສີບຸນເຮືອງ ພ້ອມດ້ວຍຄະນະ, 2014).

ເລື່ອງ “ນາງຕັນໄຕ” ຊື່ເດີມເອີ້ນວ່າ: ຄຳພີ “ປັນຈະຕັນຕະ” ຫຼື “ປັນຈະຕັນໄຕ” ແປວ່າໜັງສື 5 ຜູກ ແຕ່ປັດຈຸບັນນີ້ມີພຽງ 4 ເລື່ອງເທົ່ານັ້ນຄື: 1. ມັນທະປະກອນ (ເລື່ອງ: ງົວນັນທະກະ ກັບລາຊະສີເປັນສ່ຽວກັນ), 2. ສະກຸນາປະກອນ (ເລື່ອງ: ນົກເລືອກນາຍ), 3. ມັນທຸກະປະກອນ (ເລື່ອງກົບ ກັບ ງູ ເປັນສ່ຽວກັນ) ແລະ 4. ປີສາຈະປະກອນ (ເລື່ອງຜີເລືອກນາຍ) ໃນເບື້ອງຕົ້ນເລື່ອງທີ 2 ຄື ສະກຸນາປະກອນກ່າວວ່າໜັງສືປັນຈະຕັນຕະນີ້ ແມ່ນພະອະຕິຫາສະກະ ເປັນຜູ້ລິດຈະນາຂຶ້ນໃນປະເທດອິນເດຍ ໂດຍຮຽບຮຽງເປັນພາສາສັນສະກິດ ແຕ່ໃນລະຫວ່າງ ຄສ. 657 ຕໍ່ມາຈຶ່ງມີຜູ້ແປເປັນພາສາອາຣັບ, ພາສາຫີບຣູ, ພາສາເກຣັກ ແລະ ພາສາລາແຕັງ. ຕໍ່ມາຈົນເຖິງລະຫວ່າງ ຄສ. 1557 ຈຶ່ງມີຜູ້ແປເປັນພາສາເຢຍລະມັນ ແລ້ວເຜີຍແຜ່ອອກເປັນພາສາຊາວເອີຣົບເກືອບທຸກປະເທດທີ່ຈະເລີນ. ແຕ່ສະບັບທີ່ເປັນພາສາອັງກິດ ຜູ້ແປຕັ້ງຊື່ໜັງສືນີ້ໃໝ່ວ່າ Pilpay’s fable (ນິທານຂອງປິວເປ) ສ່ວນສະບັບທີ່ເປັນພາສາໄທຊື່ວ່າ: ຫິໂຕປະເທດ (ຂໍ້ອ້າງທີ່ເປັນປະໂຫຍດ). ຫິໂຕປະເທດສະບັບຂອງໄທນັ້ນ ແບ່ງອອກເປັນ 4 ພາກ ຄື: 1. ມິດຕະລາພ (ການຜູກສ່ຽວ), 2. ສຸຫະຣິທເພທ (ການແຕກມິດ), 3. ສັງຄາມະ (ການສົງຄາມ) ແລະ 4. ສັນຕິ (ສະຫງົບສົງຄາມ). ສະບັບທີ່ເປັນພາສາລາວນີ້ ແຕ່ເດີມແມ່ນສົມເດັດພະສັງຄະລາຊາວິຊຸນມະຫາວິຫາຣາທິປະຕິສີສັດຕະນາຄະນະທຸດ ເຈົ້າວັດວິຊຸນມະຫາວິຫານເປັນຜູ້ແປອອກຈາກພາສາປາລີ ໃນລະຫວ່າງປີ ຄສ.1507 ເປັນສະໄໝຂອງເຈົ້າວິຊຸນນະລາດ. ແລະ ມະຫາສີລາ ວີລະວົງໄດ້ຮຽບຮຽງຂຶ້ນຈາກສະບັບພາສາລາວນັ້ນ. ສະບັບພາສາລາວສະບັບນີ້ ໄດ້ແປມາຈາກພາສາປາລີ ໂດຍສົມເດັດພຣະສັງຄະຣາຊ ວິສຸນັນທະຈັກຣາທິປຕີ ສີສັດຕະນະຂຸນ, ພຣະສົງວິສຸນມະຫາວິຫານ ໃນປີ ຄສ. 1507 ໃນສະໄໝຂອງກະສັດວິຊຸນນະລາດ. ແລະ ມະຫາສີລາ ວີລະວົງ ໄດ້ຮຽບຮຽງຈາກສະບັບພາສາລາວມາເຖິງປັດຈຸບັນ (ວີລະວົງ, 1957).

ມະຫາ ສີລາ ວີລະວົງ ແມ່ນນັກພາສາສາດ, ນັກວັນນະຄະດີ, ນັກວິຊາການດ້ານພາສາ ເກີດເມື່ອວັນທີ 1 ເດືອນ ສິງຫາ ພ.ສ. 2448 ທີ່ບ້ານໜອງໝື່ນທານ ຈັ່ງຫວັດຮ້ອຍເອັດ ທ່ານເປັນນັກປະພັນທີ່ມີຜົນງານຢ່າງມະຫາສານ ເຊິ່ງຜົນງານຂອງທ່ານແບ່ງເປັນປະເພດຕ່າງໆຄື: ກ). ປະເພດແຕ່ງ, ຮີບໂຮມຂໍ້ມູນຈາກເອກະສານບູຮານມາຂຽນຂຶ້ນໃໝ່ ໃຫ້ເປັນຕຳລາຮຽນອ່ານເຂົ້າໃຈງ່າຍ ເຊິ່ງມີທັງຄຳຮ້ອຍແກ້ວ ແລະຮ້ອຍກອງ. ຂ). ປະເພດປະລິວັດ ຈາກໃບລານ, ປັບປຸງແຕ່ງຕື່ມບ່ອນຂາດວັກຂາດຕອນ ໂດຍໃສ່ວົງເລັບໄວ້ຈັດລະບຽບຄຳກອນແບບຕ່າງໆ. ເຊິ່ງເລື່ອງ ນາງຕັນໄຕ ແມ່ນເລື່ອງໜຶ່ງທີ່ທ່ານໄດ້ຮຽບຮຽງຄືນໃນປະເພດທີ ຂ (ກັນລະຍາ ແລະ ບຸນຍາວົງ, 2004).

ການວິເຄາະ ແມ່ນການຄົ້ນຄວ້າ ແລະ ຈຳແນກລົງເລິກກ່ຽວກັບລັກສະນະຕ່າງໆໃນບັນຫາໃດໜຶ່ງ, ບົດປະພັນໃດໜຶ່ງ ຫຼື ບົດເລື່ອງໃດໜຶ່ງ ໂດຍມີການຕີລາຄາຕາມທັດສະນະ ແລະ ຄວາມຄິດຂອງຜູ້ວິເຄາະ. ການວິເຄາະຕົວລະຄອນແມ່ນການໄຈ້ແຍກລົງເລິກໃຫ້ເຫັນຈຸດພິເສດດ້ານຕ່າງໆຕົວລະຄອນໃນເລື່ອງໃດໜຶ່ງໂດຍອາໄສຂໍ້ປີກຍ່ອຍຂອງເລື່ອງ ເພື່ອສະແດງໃຫ້ເຫັນຈຸດພິເສດດ້ານແນວຄິດນຶກໄສໃຈຄໍພ້ອມທັງຕີລາຄາຕົວລະຄອນນັ້ນຕາມທັດສະນະ ແລະ ຄວາມຄິດຂອງຜູ້ວິເຄາະ. (ຄຳມັງ ພ້ອມດ້ວຍຄະນະ, 2016).

ກ່ອນໜ້ານີ້, ນັກຄົ້ນຄວ້າຕ່າງປະເທດຫຼາຍຄົນໄດ້ສົນໃຈນິທານສັດ ເຊັ່ນ: (ເຜີງປັນຍາ, 2021) ສຳນວນພັນລະນາໃນນະວະ

ນິຍາຍ ລູກສາວຂອງພັກ ຂອງສຸວັນທອນ ບຸບຜານຸວົງ, ສັນທະນາ ເຢັນນານ ຄສ.1996 ການສຶກສາວິເຄາະນິທານພື້ນບ້ານພາກກາງ, (ຄໍາໜວານ, 2013) ຜົນການໃຊ້ນິທານພື້ນບ້ານພາກກາງທີ່ມີຕໍ່ຄວາມສາມາດດ້ານການຂຽນສະຫຼູບຄວາມວິຊາພາສາໄທຂອງນັກຮຽນຊັ້ນປະຖົມປີທີ 5. (Ngô Thị Thanh, 2023) Truyện ngụ ngôn người Việt và những bài học cuộc sống (ນິທານສັດຂອງຫວຽດນາມ ແລະ ບັນດາບົດຮຽນຊີວິດ). (Dang Thi Thu ,2022) Các thành tựu sưu khảo truyện ngụ ngôn Việt Nam(ຜົນສໍາເລັດການຄົ້ນຄວ້ານິທານສັດຫວຽດນາມ). (Alex, 2009) Animal Cognition: Aesop's Fable Flies from Fiction to Fact(ການຮັບຮູ້ຂອງສິ່ງທີ່ມີຊີວິດ: ນິທານສັດ Aesop ຈາກນິຍາຍສູ່ຄວາມເປັນຈິງ) . (Bahaa-eddin, 2009) Date-palms, language and the power of knowledge:An analysis of a fable from Kalila and Dimna(ພາສາ ແລະ ພະລັງແຫ່ງຄວາມຮູ້: ການວິເຄາະນິທານໝາຈອກ Kalila ແລະ Dimna).

ອີງໃສ່ບັນຫາການຄົ້ນຄວ້າຂ້າງເທິງນີ້, ພວກເຮົາເຫັນວ່າບົດຮຽນຊີວິດຈາກເລື່ອງ "ງົວ ນັນທະກະ ແລະ ລາຊະສີ (ສິງ)" ໃນນິທານ "ນາງຕັນໄຕ" ເຫຼັ້ມ 1 (ນັນທະປະກອນ) ຈະມີບົດບາດສໍາຄັນໃນການສຶກສາວັນນະຄະດີພື້ນເມືອງ, ໂດຍສະເພາະເລື່ອງ "ງົວ ນັນທະກະ ແລະ ລາຊະສີ (ສິງ) ເຊິ່ງຈຸດປະສົງເພື່ອວິເຄາະສັງລວມບົດຮຽນຊີວິດດ້ານຕ່າງໆທີ່ປາກົດໃນນິທານໂດຍຜ່ານການເຄື່ອນໄຫວຂອງຕົວລະຄອນ.

## 2. ອຸປະກອນ ແລະ ວິທີການ

2.1. ເອກະສານທີ່ນໍາມາວິເຄາະ

ເອກະສານທີ່ຜູ້ສຶກສາໃຊ້ໃນການສຶກສາ ແລະ ວິເຄາະໃນຄັ້ງນີ້ແມ່ນນິທານ " ງົວ ນັນທະກະ ແລະ ລາຊະສີ (ສິງ)" ໃນນິທານ "ນາງຕັນໄຕ" ເຫຼັ້ມ 1 (ນັນທະປະກອນ). ຂອງກົມວັນນະຄະດີ, ຮຽບຮຽງໂດຍ: ມະຫາ ສີລາ ວິລະວົງ ປີ ພສ. 2500 (ຄສ. 1957)

2.2. ວິທີເກັບກໍາຂໍ້ມູນ

ຜູ້ສຶກສາໄດ້ອ່ານນິທານ " ງົວ ນັນທະກະ ແລະ ລາຊະສີ (ສິງ) ໃນນິທານ "ນາງຕັນໄຕ" ເຫຼັ້ມ 1 (ນັນທະປະກອນ). ຫຼາຍຄັ້ງຈາກນັ້ນກໍໄດ້ບັນທຶກລະອຽດກ່ຽວກັບການສົນທະນາຂອງຕົວລະຄອນ ໂດຍການຕັ້ງຄໍາຖາມວ່າໃນນິທານມີຈັກຕົວລະຄອນຄືຕົວລະຄອນໃດແດ່, ແຕ່ລະຕົວລະຄອນນັ້ນສົນທະນາກັນກ່ຽວກັບຫຍັງ ແລະ ສິ່ງທີ່ຕົວລະຄອນໄດ້ເວົ້ານັ້ນມີຂໍ້ຄວາມທີ່ສາມາດຖ່າຍທອດເປັນບົດຮຽນຊີວິດໃຫ້ແກ່ຜູ້ອ່ານ, ຜູ້ຟັງຄືແນວໃດ ຫຼັງຈາກນັ້ນຜູ້ສຶກສາກໍໄດ້ບັນທຶກເພື່ອໃຫ້ໄດ້ຂໍ້ຄວາມ, ປະໂຫຍກຄໍາເວົ້າຈາກຕົວລະຄອນໃນນິທານທີ່ເປັນບົດຮຽນຊີວິດຈາກນິທານດັ່ງກ່າວ.

2.3. ການວິເຄາະຂໍ້ມູນ

ສໍາລັບການວິເຄາະຂໍ້ມູນພວກເຮົາໃຊ້ການຕີຄວາມໝາຍ , ພິສູດ, ການປະເມີນຜົນ ແລະ ຈັດປະເພດບົດຮຽນຊີວິດ. ໂດຍການວິເຄາະຕາມຫຼັກທິດສະດີການວິເຄາະຕົວລະຄອນ (ໂຫລານຸພາບ ແລະ ຄໍາມັງ, 2013) ການວິເຄາະຕົວລະຄອນແມ່ນໄດ້ປະຕິບັດຕາມ 4 ບາດກ້າວຄື: 1) ອ່ານບົດເລື່ອງນັ້ນໃຫ້ເຂົ້າໃຈ, 2) ບັນທຶກຂໍ້ປີກຍ່ອຍ ແລະ ລາຍລະອຽດຕ່າງໆກ່ຽວກັບຕົວລະຄອນນັ້ນ ເຊັ່ນ: ກິລິຍາທ່າທີ, ການກະທໍາ, ຄວາມເວົ້າ, ຄວາມຄິດ, ແບບແຜນການດໍາລົງຊີວິດ..., 3) ເລືອກເຟັ້ນເອົາແຕ່ຈຸດພິເສດ ແລະ ຂໍ້ປີກຍ່ອຍທີ່ສໍາຄັນ ແລະ 4) ຫາຫຼັກຖານໃນບົດເລື່ອງມາອ້າງອີງ.

## 3. ຜົນໄດ້ຮັບ

3.1 ບົດຮຽນຊີວິດດ້ານຄຸນສົມບັດ

" ຕ້ອງມີຄວາມຈິງຮັກພັກດີຕໍ່ນາຍ" (ໜ້າ 30)

" ຜູ້ທີ່ທໍາຄວາມຊອບໄວ້ ເມື່ອໄດ້ມີອໍານາດກໍບໍ່ສູ້ໃສ່ໃຈໃນຄວາມຜິດຂອງຕົນ ຄຶດສະຫາວວ່າໄດ້ທໍາປະໂຫຍດແກ່ນາຍມາແລ້ວ ຈຶ່ງຄຶດກະບົດສໍ້ໂກງກິນສະເໝີໄປ" (ໜ້າທີ 46)

"ອາມາດຄວນມີລັກສະນະຄືໝໍ້ນໍ້າຂອງລືສີ ເວລາເຫຍັ້ນໃຫ້ໄຫຼອອກແຕ່ໜ້ອຍ ເວລາຖອກໃສ່ໃຫ້ຂັງໄວ້ໄດ້ຫຼາຍ" (ໜ້າທີ 45)

"ທຸກຄົນມີໜ້າທີປົກປັກຮັກສາຊັບສົມບັດສ່ວນລວມ" (ໜ້າທີ 31)

"ເພິ່ນບໍ່ເອີ້ນຢ່າຂານ ເພິ່ນບໍ່ວານຢ່າຊ່ວຍ" (ໜ້າທີ 31)

"ຄວາມດີຂອງຜູ້ທີ່ມາກມູນໄປດ້ວຍຄວາມໂລບ ມີແຕ່ຈະພັງທະລາຍ" (ໜ້າທີ 47)

"ແນະນໍາຄົນສາໂຫດປັນຍາປູ້ຕັ້ງຮ້ອຍແນວກໍເມື່ອຍລ້າ" (ໜ້າທີ 75)

"ເວົ້າສອນຜູ້ມີສັນດານດື້ຖືດີ ຕັ້ງຮ້ອຍສະຖານ ກໍບໍ່ມີປະໂຫຍດ" (ໜ້າທີ 75)

"ກ່າວສູນທອນພົດໃຫ້ຄົນໂງ່ຟັງຕັ້ງຮ້ອຍຫົນກໍເສຍການ" (ໜ້າທີ 75)

"ການທໍາບຸນນໍາຄົນພານສັນດານຫຍາບ ຕັ້ງຮ້ອຍເທື່ອກໍບໍ່ມີຜົນ" (ໜ້າທີ 75)

"ບໍ່ຄວນອະກະຕັນຍູຕໍ່ຜູ້ມີບຸນຄຸນ" (ໜ້າທີ 28)

"ບ່າວຄົນໃດເມື່ອຍັງບໍ່ຄອບໃຫ້ນາຍຮູ້ກ່ອນແລ້ວກໍບໍ່ຄວນເຮັດສິ່ງໃດຕາມໃຈ" (ໜ້າທີ 45)

"ຜູ້ໃດເວົ້າວ່າ ຊາຫຍັງກັບເງິນອັດດຽວ ຜູ້ນັ້ນເປັນຄົນໄຮ້ຊັບ" (ໜ້າທີ 45)

"ຜູ້ໃດຄອຍຕື່ມແຖມຊັບແມ່ນແຕ່ກີບດຽວທຸກໆວັນຜູ້ນັ້ນເປັນອາມາດທີ່ດີແທ້"( ໜ້າທີ 45)

“ຂ້າໃຊ້ເກົ່າແມ່ນກະທຳຜິດກໍບໍ່ສູ້ຕົກໃຈຢ້ານ ເຮັດອັນໃດເອົາແຕ່ໃຈໂຕ” (ໜ້າທີ 46)

“ສົນທະນາໃຫ້ຖືກເວລາ” (ໜ້າທີ 33)

“ປານີໃຫ້ຕ້ອງກັບໃຈມັກ” (ໜ້າທີ 33)

“ຮ້າຍໃຫ້ສົມກັບອຳນາດຂອງຕົນ”.(ໜ້າທີ 33)

“ຜູ້ມີປັນຍາຕ້ອງຮຽນຮູ້ຈິດໃຈຂອງຄົນ ທີ່ສະແດງອອກມາດ້ວຍອາການພາຍນອກ ແລ້ວປະຕິບັດໃຫ້ຖືກໃຈໄດ້ທຸກທາງ”. (ໜ້າທີ 34)

“ຜູ້ທີ່ກະຕືລືລົ້ນຫ້າວຫັນ ມີໃຈມັກ ມີປັນຍາ ເຫັນຕາມຄຳສັ່ງໂດຍບໍ່ຊັກຊ້າ ຄົນລັກສະນະນີ້ຈຶ່ງຢູ່ໃນລາສະສຳນັກໄດ້” (ໜ້າທີ 34)

“ການທີ່ບໍ່ກ້າເຮັດຫຍັງຍ້ອນຢ້ານຜິດ ອັນນີ້ແມ່ນລັກສະນະຂອງຄົນໂງ່” (ໜ້າທີ 34)

“ເຫຼືອດສາຍຕາມາຮັບແຕ່ໄກ, ຍິ້ມຫົວພໍຄວນ, ເວົ້າຄວາມເກົ່າທີ່ເຄີຍສະໜິດຮັກແພງຂຶ້ນມາ, ຮັກແພງໃນຜູ້ທີ່ບໍ່ໄດ້ຮັບໃຊ້, ເອື້ອເຟື້ອກວ້າງຂວາງ ແມ່ນທຳຜິດກໍຕື່ມຄວາມຮັກໃຫ້ຄິດເຫັນຄວາມດີແຕ່ກ່ອນ ເຫຼົ່ານີ້ແມ່ນລັກສະນະຂອງນາຍໃຈເມດຕາ” (ໜ້າທີ 34)

“ໃຊ້ບໍ່ມີເວລາ, ລໍ້ໃຫ້ມີຫວັງຢູ່ສະເໝີ ແຕ່ບໍ່ໄດ້, ຂີ້ຖີ່ລາງວັນ ເຫຼົ່ານີ້ແມ່ນລັກສະນະຂອງນາຍຜູ້ມີໃຈສາມານ” (ໜ້າທີ 34)

“ນາຍໃຈດີ ໂທດເປັນຄຸນ” ( ໜ້າທີ 34)

“ນາຍໃຈໂຫດ ຄຸນເປັນໂທດ” (ໜ້າທີ 34)

“ນາຍຍຸດຕິທຳ ໂທດເປັນໂທດ ຄຸນກໍເປັນຄຸນ” (ໜ້າທີ 34)

“ຄົນຂີ້ຢ້ານຍ່ອມແຕກຕື່ນຍ້ອນພຽງແຕ່ໄດ້ຍິນສຽງ” (ໜ້າທີ 42)

“ຜູ້ມີໃຈບໍ່ຫວັ່ນໄຫວຫຼົງລືມໃນເຫດການອັນເກີດຂຶ້ນປັດຈຸບັນທັນດ່ວນ ຜູ້ນັ້ນສາມາດແກ້ໄຂຄວາມຂັດຂ້ອງໄດ້” (ໜ້າທີ 48)

“ເປັນນາຍໃຫ້ຮັກລູກນ້ອງ, ເປັນນາຍຕ້ອງຮູ້ ແລະເຂົ້າໃຈລູກນ້ອງ” (ໜ້າທີ 30)

“ບໍ່ຄວນລ່ວງເກີນວຽກງານຂອງຄົນອື່ນກ່ອນໄດ້ຮັບອະນຸຍາດ” (ໜ້າທີ 31)

“ຜູ້ໃດນາຍບໍ່ຮຽກແພ້ແວ້ສະເໜີໜ້າເຂົ້າໄປຫາ, ນາຍບໍ່ທັນຖາມເວົ້າສວນສາມຖະແຫຼງຈົນຟັງບໍ່ທັນ, ຍົກຍໍຕົນເປັນຄົນຮັກແພງຂອງນາຍ ຜູ້ນັ້ນປັນຍາປູ້” (ໜ້າທີ 33)

“ເມື່ອຍັງບໍ່ເຖິງເວລາອັນຄວນເວົ້າກໍຢ່າເວົ້າ ເພາະເວົ້າບໍ່ຖືກເວລາ ເຖິງແມ່ນພະອໍລະທັນ ຜູ້ເກັ່ງກ້າໃນທາງສີປາກ ກໍຍັງຖືກຕິວ່າ ບໍ່ມີຄວາມຄິດ” (ໜ້າທີ 34)

3.2 ບົດຮຽນຊີວິດດ້ານການເມືອງ-ສັງຄົມ

“ຜູ້ໃດຈະມີປັນຍາຍອດຍິ່ງກໍຕາມ ກໍບໍ່ສາມາດຫ້າມຄວາມຕາຍໄດ້ໃນເມື່ອມັນມາເຖິງ” (ໜ້າທີ 83)

“ຄວນຖອດອຳນາດຜູ້ຮັກສາຄັງໃຫ້ເລື້ອຍໆ ເພາະວ່າຜ້າອາບນ້ຳບິດເທື່ອດຽວນ້ຳຈະໄຫຼອອກໝົດໄດ້ຢ່າງໃດ” (ໜ້າທີ 47)

“ພະລາຊາທີ່ມີອາມາດໂລເລ ມີແຕ່ຈະດັບວາຍ” (ໜ້າທີ 47)

“ ສິ່ງໃດແດ່ ທີ່ທຳມະຊາດຂອງມັນເອງ ຈະບອກວ່າງາມຫຼືບໍ່ງາມ ສິ່ງໃດຖືກໃຈຂອງຜູ້ໃດ ສິ່ງນັ້ນກໍເປັນຂອງງາມສຳລັບຜູ້ນັ້ນ” (ໜ້າທີ 34)

“ເຈົ້ານາຍຜູ້ໃຫຍ່ມັກຜາຍໂຜດພໍໃຈແກ່ຄົນຢູ່ໃກ້ ເຖິງຈະບໍ່ມີຄວາມຮູ້, ສະກຸນຕ່ຳ ແລະ ກິລິຍາຫຍາບກໍຕາມ ດັ່ງດຽວກັບສະຕີ ແລະ ເຄືອເຂົາມັກກ້ຽວພັນກັບຂອງທີ່ຢູ່ໃກ້ສະເໝີ” (ໜ້າທີ 34)

“ແກ້ວມະນີເອົາໄປປະດັບຕີນ ແກ້ວແວ່ນເອົາໄວ້ເທິງຫົວເມື່ອຈະຊື້ຂາຍກັນ ແກ້ວແວ່ນກໍມີລາຄາເທົ່າແກ້ວແວ່ນທຳມະດາແກ້ວມະນີກໍມີລາຄາເທົ່າແກ້ວມະນີ” (ໜ້າທີ 36)

“ແປວໄຟເຖິງຈະຈັບປີ້ນລົງກໍບໍ່ທົ່ງລົງລຸ່ມເລີຍ” (ໜ້າທີ 36)

“ເມື່ອໃດນາຍຫາກຈັດການນຳຄົນທຸກພວກສະເໝີກັນໝົດ ບໍ່ໃຫ້ແຕກຕ່າງ (ດີກັບຊົ່ວເທົ່າກັນ) ເມື່ອນັ້ນອານຸພາບອັນເປັນກຳລັງຂອງກິດຈະການກໍຈະເສື່ອມຖອຍ” (ໜ້າທີ 36)

“ແກ້ວມະນີອັນມີລາຄາແພງ ຄວນປະດັບກັບທອງຄຳຈະເອົາໄປປະດັບກັບແຫວນຂີ້ກົ່ວ ກໍຈະບໍ່ມີແສງເລີຍ” (ໜ້າທີ 37)

“ມ້າ, ຫອກ ດາບ, ໜັງສື, ພິນ, ຖ້ອຍຄຳ, ຊາຍ, ຍິງ ຈະໃຊ້ໄດ້ດີ ຫຼື ບໍ່ດີ ແລ້ວແຕ່ວິທີຂອງຜູ້ໃຊ້” (ໜ້າທີ 37)

“ປະຊາຊົນພົນລະເມືອງຈະເຄົາລົບຢຳແກງຄົນຜູ້ທີ່ພະລາຊາຍ້ອງຍໍ ຜູ້ໃດຖືກພະລາຊາຖືຖືກປະປ່ອຍເສຍແລ້ວ ຜູ້ນັ້ນກໍຖືກເຂົາຖືຖືກເຊັ່ນກັນ” (ໜ້າທີ 42)

“ຝາຍກັ້ນນ້ຳຍ່ອມຂາດພັງທະລາຍຍ້ອນກະແສນ້ຳເຊາະ” (ໜ້າທີ 42)

“ມິດຕະພາບຍ່ອມແຕກມ້າງຍ້ອນການສັບສໍ່” (ໜ້າທີ 42)

“ຜູ້ໃດມີປັນຍາຜູ້ນັ້ນເປັນຜູ້ມີກຳລັງ ຜູ້ໄຮ້ປັນຍາ ຫຼືຈະສູ້ຜູ້ມີປັນຍາໄດ້” (ໜ້າທີ 50)

“ຖ້າຈະຂົ່ມດ້ວຍກຳລັງ ແລະ ອຳນາດບໍ່ສຳເລັດ ຕ້ອງໃຊ້ກົນອຸບາຍ” (ໜ້າທີ 50)

“ຜູ້ໃດກໍຕາມທີ່ເຮົາຍັງບໍ່ຮູ້ຈັກຫົວຕີນປາຍນອນຜູ້ນັ້ນບໍ່ຄວນໃຫ້ຢູ່ຮ່ວມເຮືອນ” (ໜ້າທີ 56)

"ຜູ້ມີຄວາມຄິດຍັງພໍຕັກເຕືອນກັນໄດ້ ແຕ່ຜູ້ບໍ່ມີຄວາມຄິດ ບໍ່ຄວນຕັກເຕືອນເລີຍ" (ໜ້າທີ 69)

"ໄມ້ແຫ້ງຕາຍຂານທີ່ຄົດງໍ ຜູ້ມີປັນຍາບໍ່ຄວນເອົາມາເບັດເຮັດໃຫ້ຊື່" (ໜ້າທີ່ 70)

"ດາບງ້າວບໍ່ຄວນຟັນກ້ອນຫີນ ຄົນຜູ້ມີປັນຍາບໍ່ຄວນກ່າວເຕືອນຜູ້ຫຍາບຊ້າກ້າແຂງ" (ໜ້າທີ 70)

"ຢ່າໄວ້ໃຈແມ່ນໍ້າ, ຜູ້ມີສາດຕາວຸດໃນມື, ສັດມີເລັບ, ມີເຂົາ, ສະຕີ ແລະ ພະລາຊາ" (ໜ້າທີ 75)

"ຜູ້ມີກຳລັງນ້ອຍ ຫຼື ບໍ່ມີກຳລັງກໍຕາມ ແຕ່ມີພຽງປັນຍາປະກອບອຸບາຍສະຫຼາດ ກໍອາດສາມາດປະຈົນແພ້ຜູ້ມີກຳລັງມາກໄດ້" (ໜ້າທີ 77)

"ຄວາມສາມັກຄີໂຮມກຳລັງກັນຂອງສິ່ງເລັກນ້ອຍສາມາດເຮັດໃຫ້ວຽກການທີ່ກະທຳສຳເລັດຜົນໄດ້ຕາມປະສົງ" (ໜ້າທີ 79)

"ເສັ້ນຫຍ້າທີ່ຟັ່ນເຂົ້າກັນເປັນເຊືອກ ຍັງສາມາດຜູກຊ້າງສານທີ່ຊົບມັນໄດ້" (ໜ້າທີ 79)

"ກຳລັງແຮງຂອງໝູ່ຍາດພີ່ນ້ອງທີ່ສາມັກຄີກັນທຳປະໂຫຍດ ກຳລັງແຮງຂອງພະອິນກໍບໍ່ສາມາດຈະປ້ານໄດ້" (ໜ້າທີ 79)

2.4. ບົດຮຽນຊີວິດດ້ານການປະພຶດ-ປະຕິບັດ

"ຄວາມຟູມເຟືອຍ, ຂາດການສືບສວນ, ການເກັບຫອມຊັບໂດຍຜິດທາງ ແລະສໍ້ໂກງຂອງຜູ້ຢູ່ຫ່າງ ເຫຼົ່ານີ້ເປັນລັກສະນະຊົ່ວຮ້າຍຂອງການຄັງ" (ໜ້າທີ 46)

"ອາມາດທຸກຄົນບໍ່ຄວນແຕ່ງຕັ້ງໃຫ້ຮັ່ງມີຫຼາຍ" (ໜ້າທີ 46)

"ລົງໂທດແດ່, ເລື່ອນຕຳແໜ່ງແດ່, ຍ້າຍໜ້າທີແດ່ ນີ້ເປັນວິທີດຳເນີນການຂອງຜູ້ນຳ" (ໜ້າທີ 47)

"ພະລາຊາບໍ່ຄວນປ່ອຍໃຫ້ໂອລິດດື້ດ້ານ, ອັນສີລິຂອງຜູ້ດື້ດ້ານມີແຕ່ຈະມົວໝອງ" (ໜ້າທີ 47)

"ອັນຜູ້ຈະກະທຳທຸລະຢ່າງໃດຢ່າງໜຶ່ງຖ້າບໍ່ຝ້າວທຳໃຫ້ທັນກັບເຫດການແລ້ວ ເວລາກໍຈະກືນກິນທຸລະຂອງຜູ້ນັ້ນເສຍ" (ໜ້າທີ 60)

"ຖິ້ມໝາເສຍດາຍເຕົ່າ ຖິ້ມເຕົ່າເສຍດາຍໝາ" (ໜ້າທີ 73)

"ໃນກາລະໃດເມື່ອບໍ່ສູ້ຕ້ອງຈົບຫາຍແນ່ ແຕ່ເມື່ອສູ້ຍັງມີທາງເອົາຕົວພົ້ນ" (ໜ້າທີ 88)

"ໃນການຕໍ່ສູ້ຖ້າມີໄຊກໍໄດ້ລາບຜົນ ຖ້າຕາຍກໍໄດ້ໄປຊົມສາວສະຫວັນ" (ໜ້າທີ 89)

"ເຈົ້າຂຸນມູນນາຍ ທ້າວພະຍາຕົນເປັນໃຫຍ່ເປັນປະທານແຫ່ງຄົນທັງຫຼາຍ ຈຶ່ງພິຈາລະນາໄຕຕອງຕາມຮີດຄອງບູຮານທຳມະຄຳສອນແຫ່ງນັກປາດເຈົ້າທັງຫຼາຍ ດ້ວຍອຸບາຍອັນຊອບ ຢ່າປະກອບດ້ວຍໂມໂຫ ຟັງຄຳຜູ້ມີ່ແຮງສັບສໍ່ຜິດພອນ ຄວນໄຕ່ຕອງດູດ້ວຍປັນຍາໃຫ້ແຈ້ງ ເຫັນແມ່ນແມ້ງແທ້ຈຶ່ງທຳຕາມ ແລະ ຢ່າຜີປອງກະທຳໂທດ ມັກກໍ້ໂກດໂກທາ ມີເຫິງສາບມາດ ຈັກເປັນດັ່ງງົວອຸສຸພະຣາດ ແລະ ລາຊະສີ ລະຄອງດີອັນຊອບມາປະກອບດ້ວຍໂມໂຫ ເລີຍເສຍໂຕຕາຍເປົ່າ ເຫດຟັງແຕ່ຄວາມຍໍວະເຍົ້າຂອງຄົນພານ" (ໜ້າທີ 98)

"ບໍ່ຄວນເອົາຕົວລອດເປັນຍອດດີ" (ໜ້າທີ 30)

**4. ວິພາກຜົນ**

ຈາກຜົນການສຶກສາພວກເຮົາເຫັນໄດ້ວ່າ, ບົດຮຽນຊີວິດທີ່ໄດ້ຈາກນິທານ "ງົວ ນັນທະກະ ແລະ ລາຊະສີ (ສິງ)". ມີຫຼາຍດ້ານເຊັ່ນ: ບົດຮຽນຊີວິດກ່ຽວກັບຄຸນສົມບັດເປັນຕົ້ນແມ່ນຄວາມກະຕັນຍູຮູ້ບຸນຄຸນ, ຄວາມອົດທົນ, ຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ບົດຮຽນກ່ຽວກັບການເມືອງ-ສັງຄົມເປັນຕົ້ນແມ່ນ: ການຮູ້ຈັກວາງແຜນປະເມີນແນວຄິດຈິດໃຈຂອງລູກນ້ອງ, ຮູ້ຈັກຊັ່ງຊາຕີລາຄາຜົນໄດ້ຜົນເສຍຈາກການແບ່ງວຽກງານ, ຢູ່ໃນສັງຄົມອາດປາສະຈາກບໍ່ໄດ້ຄົນດີ-ຄົນຊົ່ວ, ຄົນສັດຊື່-ຄົນໂລບມາກ ແລະ ບົດຮຽນກ່ຽວກັບການປະພຶດ-ປະຕິບັດເປັນຕົ້ນແມ່ນ: ການຂາດສະຕິ, ການຟູມເຟືອຍ, ການປະຕິບັດບໍ່ຖືກຕ້ອງຈະມີຜົນເສຍທີ່ຕາມມາຢ່າງຍິ່ງໃຫຍ່. ຈາກບົດຮຽນດັ່ງກ່າວມີຄວາມສຳຄັນຫຼາຍເພາະໄດ້ເປັນຄະຕິສອນໃຈໃຫ້ຄົນຢູ່ໃນສັງຄົມສາມາດນຳໃຊ້ເຂົ້າໃນຊີວິດປະຈຳວັນ ແລະ ການປະຕິບັດວຽກງານຕ່າງໆໃຫ້ໄດ້ຮັບຜົນດີ. ເມື່ອທຽບໃສ່ກັບບົດວິໄຈຂອງ Ngô Thị Thanh (2023) " ນິທານສັດຂອງຫວຽດນາມ ແລະ ບັນດາບົດຮຽນຊີວິດ". ແມ່ນມີຄວາມແຕກຕ່າງເລັກນ້ອຍ ເພາະບົດຄວາມນີ້ແບ່ງອອກເປັນ 3 ດ້ານຄື: ບົດຮຽນກ່ຽວກັບອຸດົມການ, ຈັນຍາບັນ, ປັດຊະຍາ, ບົດຮຽນກ່ຽວກັບການສື່ສານ-ພຶດຕິກຳໃນຊີວິດ ແລະ ບົດຮຽນກ່ຽວກັບຄຸນຄ່າຂອງແຮງງານ ແລະ ຄຸນຄ່າຂອງຕົນເອງ, ສ່ວນສິ່ງທີ່ຄືກັນທັງສອງບົດຄວາມລ້ວນແຕ່ຄົ້ນຄວ້າບົດຮຽນຊີວິດຈາກນິທານສັດ. ນອກຈາກນີ້ Daenseekaew (2016) ໄດ້ສຶກສາກ່ຽວກັບ ການສຶກສານິທານພື້ນບ້ານອຳເພີໂກສູມພິໄສໃນດ້ານຄະຕິຊົນພົບວ່າໃນເນື້ອຫານິທານສະທ້ອນໃຫ້ເຫັນວິຖີຊີວິດການເປັນຢູ່ຂອງທ້ອງຖິ່ນໃນຫຼາຍດ້ານຄື: ປະຫວັດສະພາບແວດລ້ອມທາງພູມສາດ, ລະບົບຄອບຄົວ, ເສດຖະກິດ, ການເລືອກຄູ່ຄອງ, ອາຊີບ, ຄວາມເຊື່ອປະເພນີ, ຄ່ານິຍົມ, ຄວາມເຊື່ອກ່ຽວກັບສາສະໜາ, ຄວາມເອື້ອເຟື້ອເຜື່ອແຜ່, ຄວາມເຄົາລົບເຊື່ອຟັງ ແລະ ຍົກຍ້ອງຜູ້ທີ່ມີຄວາມກະຕັນຍູ. ບົດຄົ້ນຄວ້າຂອງ Thamaboud (2022) ໄດ້ຄົ້ນພົບວ່າ: ການຈັດການຮຽນຮູ້ວິຊາພາສາໄທໂດຍໃຊ້ວັນນະກຳທ້ອງຖິ່ນອີສານ ເພື່ອເສີມສ້າງຄະຕິທຳສຳລັບນັກຮຽນໃນສະຕະວັດທີ 21 ຂອງຄູພາສາໄທລະດັບປະຖົມສຶກສະພາບລວມ

ຢູ່ໃນລະດັບຫຼາຍທີ່ສຸດ. ບົດຄົ້ນຄວ້າຂອງ Jantadech & Kabmala (2018) ໄດ້ຄົ້ນພົບວ່າ: ຂອບເຂດ ແລະໂຄງສ້າງເນື້ອຫາຄວາມຮູ້ນິທານພື້ນບ້ານ ສາມາດຈັດກຸ່ມຄວາມຮູ້ໄດ້ 8 ກຸ່ມຄວາມຮູ້ ຄື: ຄວາມຮູ້ກ່ຽວກັບເນື້ອໃນນິທານ, ຄວາມເຊື່ອ, ປະເພນີ, ຄ່ານິຍົມ, ພິທີກຳ, ສະຖານທີ່, ຕົວລະຄອນ ແລະ ວັດຖຸສິ່ງຂອງວິເສດ. ບົດຄົ້ນຄວ້າຂອງ Namon (2008) ໄດ້ຄົ້ນພົບວ່າ: ນິທານພື້ນບ້ານອີສານນອກຈາກໃຫ້ຄວາມຮູ້, ຄວາມເພີດເພີນ, ສະໜຸກສະໜານ, ມ່ວນຊື່ນໂຮແຊວ ແລະຫຼັກພຸດທະປັດຊະຍາແນວຄິດ, ຫຼັກຄະຕິທຳ, ແນວທາງຍຶດຖືປະພຶດປະຕິບັດໃນຊີວິດປະຈຳວັນແລ້ວ ຍັງເຮັດໃຫ້ຊາບເຖິງແນວຄິດອັນລ້ຳເລີກກວ້າງໄກວິຈິດພິສດານທີ່ສະແດງອອກຜ່ານທາງສຶກາງ ຄື ວັນນະກຳໃບລານອັນເປັນປະຈັກພະຍານທີ່ຍັງຄົງຄ້າງຫຼົງເຫຼືອໄວ້ເປັນມໍລະດົກຕົກທອດອັນລ້ຳຄ່າທາງສັງຄົມ. ບົດຄົ້ນຄວ້າຂອງ Saensra (2018) ໄດ້ຄົ້ນພົບວ່າ ບົດບາດຂອງນິທານພື້ນບ້ານມີ 5 ປະການທີ່ສຳຄັນໄດ້ແກ່ ໃຫ້ຄວາມເພີດເພີນ, ຊ່ວຍລະບາຍອາລົມເກັບກົດຄັບຂ້ອງໃຈຂອງຊາວບ້ານ, ເປັນເຄື່ອງໃຫ້ການສຶກສາ, ເສີມສ້າງຈິນຕະນາການ, ເປັນເຄື່ອງສະທ້ອນວິຖີຊີວິດ ແລະ ພູມປັນຍາຂອງຊາວບ້ານ ແລະ ເປັນວັນນະກຳທ້ອງຖິ່ນເຊິ່ງເປັນມໍລະດົກສຳຄັນທາງວັດທະນະທຳ. ເມື່ອສົມທຽບກັບບັນດາບົດຄົ້ນຄວ້າທີ່ໄດ້ຍົກມາຂ້າງເທິງນີ້ເຫັນວ່າມີຄວາມສອດຄ່ອງໂດຍສະເພາະແມ່ນດ້ານການປະພຶດປະຕິບັດ, ປັດຊະຍາແນວຄິດ, ຫຼັກຄະຕິທຳ ແລະ ການກະຕັນຍູຮູ້ບຸນຄຸນ ເຊິ່ງສິ່ງດັ່ງກ່າວນີ້ລ້ວນແຕ່ຖອດຖອນຈາກບົດຮຽນຊີວິດທີ່ໄດ້ຈາກນິທານພື້ນເມືອງເປັນຕົ້ນແມ່ນນິທານສັດ.

**5. ສະຫຼຸບ**

ບົດຮຽນຊີວິດທີ່ໄດ້ຈາກນິທານ "ງົວ ນັນທະກະ ແລະ ລາຊະສີ (ສິງ)" ມີທັງໝົດ 67 ຂໍ້ຄວາມ. ແບ່ງອອກເປັນ 3 ດ້ານຄື: ບົດຮຽນຊີວິດກຽວກັບຄຸນສົມບັດ ມີ 33 ຂໍ້ຄວາມ, ບົດຮຽນກ່ຽວກັບການເມືອງ-ສັງຄົມ ມີ 24 ຂໍ້ຄວາມ ແລະ ບົດຮຽນກ່ຽວກັບການປະພຶດ-ປະຕິບັດ ມີ 10 ຂໍ້ຄວາມ. ບົດຮຽນຊີວິດຈາກນິທານສັດມັນໄດ້ຖ່າຍທອດຄວາມຮູ້ ແລະ ບົດຮຽນອັນເປັນຕະຕິເຕືອນໃຈໃຫ້ແກ່ໝົດທຸກຄົນ, ເປັນການສຶກສາຄົນດ້ວຍວິທີສົມທຽບໂດຍທາງອ້ອມແບບເອົາເລື່ອງສັດມາເວົ້າເລື່ອງຄົນ.

ໃນປັດຈຸບັນເຖິງແມ່ນວ່ານິທານສັດບໍ່ຂະຫຍາຍຕົວຫຼາຍປານໃດ ແຕ່ມັນກໍຍັງມີຄຸນປະໂຫຍດຢ່າງຫຼວງຫຼາຍ ແລະ ເປັນສິ່ງຈຳເປັນທີ່ສຸດໃນການສຶກສາອົບຮົມຄົນຮຸ່ນໃໝ່ໃຫ້ກາຍເປັນຄົນສັງຄົມນິຍົມ. ຢູ່ບັນດາປະເທດທີ່ມີເງື່ອນໄຂສະດວກເພິ່ນໄດ້ເກັບກຳທ້ອນໂຮມນິທານສັດມາຕີພິມເປັນປຶ້ມອ່ານປະກອບຮູບພາບ, ສ້າງເປັນຮູບເງົາກາຕູນ ຫຼື ລະຄອນສັ້ນເພື່ອສຶກສາອົບຮົມຜູ້ອ່ານ, ຜູ້ຊົມ ໂດຍສະເພາະແມ່ນເດັກນ້ອຍທີ່ຈະຕ້ອງໄດ້ສຶກສາຮໍ່າຮຽນຈາກການຟັງ, ການເບິ່ງ ຫຼື ສັງເກດຜ່ານຮູບພາບກາຕູນເພື່ອຮັບເອົາບົດຮຽນຊີວິດຈາກນິທານສັດມາໝູນໃຊ້ໃນຊີວິດຕົວຈິງ.

**6. ຂໍ້ຂັດແຍ່ງ**

ຂ້າພະເຈົ້າ, ໃນຖານະນັກຄົ້ນຄວ້າວິທະຍາສາດ, ປະກາດວ່າຂໍ້ມູນທັງໝົດທີ່ຢູ່ໃນບົດຄວາມວິທະຍາສາດນີ້ບໍ່ມີຂໍ້ຂັດແຍ້ງກັບຝ່າຍໃດຝ່າຍຫນຶ່ງ ແລະ ບໍ່ໄດ້ຢູ່ໃນເງື່ອນໄຂຂອງຝ່າຍໃດ. ໃນກໍລະນີທີ່ມີການລະເມີດໃນທາງໃດກໍຕາມ, ຂ້າພະເຈົ້າຮັບຜິດຊອບຢ່າງເຕັມທີ່.

**7. ເອກະສານອ້າງອີງ**


ກັນລະຍາ, ດ., ແລະ ບຸນຍາວົງ, ດ. (2004). *ມະຫາ ສີລາ ວີລະວົງ ຊີວິດ ຜູ້ຂ້າ.* ໂຮງພິມມັນທາຕຸຣາດ, ນະຄອນຫຼວງວຽງຈັນ, ສປປລາວ.

ຄຳມັງ, ພ., ປັນຍາວົງ, ສ., ຄຳມະວົງ, ທ., ແລະ ໂຫລານຸພາບ, ສ. (2016). *ແບບຮຽນພາສາລາວ ຊັ້ນມັນທະຍົມສຶກສາປີທີ7.* ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ຄຳຫວານ, ພ. (2013). *ຜົນການນຳໃຊ້ນິທານພື້ນບ້ານພາກກາງທີ່ມີຕໍ່ຄວາມສາມາດດ້ານການຂຽນສະຫຼຸບຄວາມວິຊາພາສາໄທຂອງນັກຮຽນຊັ້ນປະຖົມປີທີ 5.* ຂະແໜງວິຊາຫຼັກສູດແລະການສອນ ສາຂາວິຊາສຶກສາສາດ ມະຫາວິທະຍາໄລສຸໂຂໄທທຳມາທິຣາດ.

ສີບຸນເຮືອງ, ບ., ປັນຍາວົງ, ສ., ແລະ ວິໄລສັກ, ສ. (2014). *ແບບຮຽນວັນນະຄະດີ ຊັ້ນມັດທະຍົມສຶກສາປີທີ 5.* ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ເພັງປັນຍາ, ພ. (2021). ສຳນວນພັນລະນາໃນນະວະນິຍາຍ ລູກສາວຂອງພັກ ຂອງສຸວັນທອນ ບຸບຜານຸວົງ. *The 4th National anh Internationat Conference on Academic Rcsearch of Souphanouvong University"CARSU4"*, 161-167.

ພົນລືຊາ, ຄ., ແລະ ແກ້ວຄູນບໍລິສັກ, ພ. (2010). *ວັນນະຄະດີ ຊັ້ນມັດທະຍົມ ປີທີ 1.* ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ວິລະວົງ, ສ. (1957). *ນິທານ ນາງຕັນໄຕ 1 (ນັນທະປະກອນ).* ກົມວັນນະຄະດີ.

ວົງດາລາ, ບ., ຈະເລີນລັງສີ, ບ., ສີມານະ, ສ., ຖະຫວິນເຊື້ອ, ອ., ມະນີວັນ, ມ., ແລະ ສຸວັນວິໄຊ, ມ. (2008). *ວັນນະຄະດີລາວ.* Nhà xuất bản giáo dục việt nam.

ໂຫລານຸພາບ, ສ., ແລະ ຄຳມັງ, ພ. (2013). *ແບບຮຽນພາສາລາວ ຊັ້ນມັດທະຍົມປີທີ 4.* ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

Alex, H. (2009). Animal Cognition: Aesop's Fable Flies. *Current Biology Vol 19 No 17*, 731-732.

Bahaa-eddin, M. (2009). Date-palms, language and the power of knowledge, *science Direct journal of Pramatics 41*, 2515-2534.

Daenseekaew, K. (2016). *Folktales in Kosumpisai District: A Folklore Study.* Rajabhat mahasarakham university.

Dang Thi Thu, T. (2022). Achievements in collecting vietnamese fables. *Ho chi minh city university of education journal of science*, 578-589.

Jantadech, A. & kapmala, M.(2018). The deverlopment of isan folktale ontologyfor information access and retrieval. *Srinakharinwirot Research and Development Journal*, .206-191

Ngô Thị Thanh, Q. (2023). truyện ngụ ngôn người Việt và những bài cuộc sống. *nghiên cứu văn học*, 3-13.

Namon, S. Champarak, B. & Boonkapa, Ch . (2008). *The education analyses tale local northeast influence, in a book palm Alphabet dharma northeast leaves, in Ubon Rajathani.* Mahachulalongkornrajvidyalaya University vittayakhed ubonrajathani.

Saensra, A. (2018). *Local wisdom preservation vlafolktales at kasetsomboon district chaiyuphum provine* [Doctoral thesis], Burapha University.

Thamaboud, B. (2022). *Synthesizing isan local literature to strengthenmorals for students in the 21century.* Mahamougkoudlartvithayalay university.

Yennan, Ch.(1996). *An analytical study folktales of the central region of thailand.* [Master thesis], Srinakarinwirot University.